ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເລກທີ..41../ຊກ

ເຊກອງ,ວັນທີ..19.03.2025

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ

- ອີງຕາມກົດໝາຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015; ພາກທີ III ໝວດທີ 4 ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມກົດໝາຍວ່າດ້ວຍມໍຣະດົກແຫ່ງຊາດ (ສະບັບປັບປຸງ) ເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013 ພາກທີ IV ໝວດທີ 2, ໝວດທີ 3 ການຄຸ້ມຄອງ ແລະ ການປົກປັກຮັກສາມໍຣະດົກແຫ່ງຊາດ;
- ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ), ເລກທີ06/ສພຊ, ລົງວັນທີ 16ກໍລະກົດ 2021, ໝວດທີ 8 ມາດຕາ 82 ການສ້າງຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ອີງຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II, ສະບັບເລກທີ 09/ສພຂ, ລົງວັນທີ 28 ມັງກອນ 2025;
- ອີງຕາມໜັງສືສະເໜີ ຂອງ ຄະນະປະຈຳສະພາປະຊາຊົນແຂວງເຊກອງ ສະບັບເລກທີ 34/ຄປຈ, ລົງວັນທີ 05 ກຸມພາ 2025.

## ເຈົ້າແຂວງຕົກລົງ
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ ,ກວດກາ, ປົກປັກຮັກສາ ແລະຊົມໃຊ້ ເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ ໃຫ້ເປັນເອກະພາບກັນມີຄວາມເປັນລະບຽບຮຽບຮ້ອຍ, ມີຄຸນຄ່າທາງດ້ານຈິດໃຈເປັນສະຖານທີ່ເຄົາລົບກາບໄຫວ້ ແລະສັກກະລະບູຊາຂອງປະຊາຊົນບັນດາເຜົ່າຊາວແຂວງເຊກອງແນໃສ່ສົ່ງເສີມສ້າງຄຸນຄ່າທາງດ້ານວັດທະນະທຳ ແລະປະຫວັດສາດຂອງປະຊາຊົນບັນດາເຜົ່າໃຫ້ກາຍເປັນສະຖານທີ່ທ່ອງທ່ຽວແບບຍືນຍົງປະກອບສ່ວນເຂົ້າໃນການປົກປັກຮັກສາແລະພັດທະນາປະເທດຊາດ.

**ມາດຕາ 2 ເສົາຫຼັກເມືອງ ແລະ ອະນຸສາວະລີອິງແກ້ວ.**

ເສົາຫຼັກເມືອງ: ແມ່ນປະຕິມາກຳທາງດ້ານສິລະປະວັດທະນະທຳແລະສະຖາປັດຕະຍາກຳທີ່ໂດດເດັ່ນ ແລະເອກອ້າງເຖິງຄວາມສາມັກຄີເປັນວັດທະນະທຳທີ່ມີເອກະລັກສະເພາະ,ເປັນສູນລວມທາງດ້ານຈິດໃຈ ຂອງບັນດາເຜົ່າ ຊາວແຂວງເຊກອງ;

ອະນຸສາວະລີອິງແກ້ວ: ແມ່ນປະຕິມາກຳທາງດ້ານສິລະປະວັດທະນະທຳ ແລະ ປະຫວັດສາດທີ່ໂດດເດັ່ນເປັນສະຖານທີ່ລະນຶກເຖິງຄຸນງາມຄວາມດີຂອງບຸກຄົນ ໃນເຫດການສຳຄັນທາງປະຫວັດສາດຂອງຊາດ ເປັນສູນລວມແຫ່ງຄວາມສາມັກຄີ, ຢັ້ງຢືນເຖິງຄວາມເຂັ້ມແຂງ, ຄວາມອົງອາດກ້າຫານໃນການຕໍ່ສູ້ປົກປັກຮັກສາບ້ານເມືອງຂອງວິລະບູລຸດແຫ່ງຊາດ.

**ມາດຕາ 3 ອະທິບາຍຄຳສັບ.**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. ປະຕິມາກຳ ແມ່ນການປັ້ນ, ການຫຼໍ່-ແກະສະຫຼັກ ໃຫ້ກາຍເປັນຜົນງານ ແລະ ຜະລິດຕະພັນ;
2. ສະຖາປັດຕະຍະກຳໝາຍເຖິງສິ່ງກໍ່ສ້າງແຫ່ງສິລະປະທີ່ໂດດເດັ່ນທາງດ້ານວັດທະນະທຳແລະປະຫວັດສາດເຊິ່ງຕິດພັນກັບແບບແຜນດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ, ຂອງບັນພະບູລຸດ ແລະວິລະບູລຸດຂອງຊາດ;
3. ປູຊະນີຍະສະຖານ ໝາຍເຖິງ ສະຖານທີ່ ເຊິ່ງເປັນບ່ອນເຄົາລົບບູຊາ ຂອງ ປະຊາຊົນທີ່ຕິດພັນກັບການເຄື່ອນໄຫວທາງສາສະໜາ, ຮີດຄອງປະເພນີ ແລະ ຮ່ອງຮອຍປະຫວັດສາດ;
4. ພິທີກຳທາງສາສະໜາ ໝາຍເຖິງການເຮັດພິທີກຳທາງສາສະໜາ ຕາມກົດບັນຍັດ ຂອງ ແຕ່ລະສາສະໜາ;
5. ວັດຖຸພັນໝາຍເຖິງ ສິ່ງທີ່ເປັນວັດຖຸເປັນຕົ້ນ: ພຣະພຸດທະຮູບ, ອຸປະກອນການຜະລິດ, ຜົນງານການຄົ້ນຄວ້າວິທະຍາສາດ ແລະສິ່ງທີ່ບໍ່ເປັນວັດຖຸເປັນຕົ້ນ: ງານບຸນປະເພນີ ເຊິ່ງຄຸນຄ່າທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະປົກປັກຮັກສາ ຂອງ ພິພິທະພັນ.

**ມາດຕາ 4 ນະໂຍບາຍຂອງລັດ.**

ອົງການປົກຄອງແຂວງໄດ້ຊຸກຍູ້, ສົ່ງເສີມ ແລະສ້າງທຸກເງື່ອນໄຂໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະຕ່າງປະເທດປະກອບສ່ວນເຂົ້າໃນການຄຸ້ມຄອງ, ໃຫ້ບໍລິການ, ປົກປັກຮັກສາ, ພັດທະນາເສົາຫຼັກເມືອງ ແລະອະນຸສາວະລີອິງແກ້ວໃຫ້ກາຍເປັນສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳ ແລະປະຫວັດສາດ ເພື່ອໃຫ້ມີຄວາມຍືນຍົງ.

**ມາດຕາ 5 ຫຼັກການ.**

ການຄຸ້ມຄອງ, ບໍລິການ ໃນເຂດເສົາຫຼັກເມືອງ ແລະອະນຸສາວະລີອິງແກ້ວຂອງແຂວງເຊກອງ ຕ້ອງໄດ້ປະຕິບັດຕາມຫຼັກການດັ່ງນີ້ :

1. ການຄຸ້ມຄອງ, ບໍລິການໃນເຂດເສົາຫຼັກເມືອງ ແລະອະນຸສາວະລີອິງແກ້ວ ຕ້ອງປະຕິບັດຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດທີ່ໄດ້ກຳນົດໄວ້;
2. ການຈັດຕັ້ງແຕ່ລະຂັ້ນ, ຂະແໜງການກ່ຽວຂ້ອງ, ນັກທ່ອງທ່ຽວພາຍໃນ ແລະຕ່າງປະເທດ ຕ້ອງມີສ່ວນຮ່ວມໃນການເຄົາລົບ ແລະປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;
3. ການສ້າງສາພັດທະນາ ໃນບໍລິເວນເຂດເສົາຫຼັກເມືອງ ແລະອະນຸສາວະລີອິງແກ້ວ ຕ້ອງຕິດພັນກັບການອະນຸລັກ ແລະຮັບປະກັນບໍ່ໃຫ້ສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ, ໃນທັດສະນີຍະພາບບໍລິເວນດັ່ງກ່າວ

**ມາດຕາ 6 ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ມາເຄື່ອນໄຫວ, ກາບໄຫວ້, ສັກກະລະບູຊາ, ທ່ຽວຊົມ ໃນເຂດເສົາຫຼັກເມືອງ ແລະອະນຸສາວະລີອິງແກ້ວ ຢູ່ແຂວງເຊກອງ.

## ໝວດທີ 2
## ການຄຸ້ມຄອງເສົາຫຼັກເມືອງ ແລະ ອະນຸສາວະລີອິງແກ້ວ

**ມາດຕາ 7 ການຄຸ້ມຄອງເສົາຫຼັກເມືອງ ແລະອະນຸສາວະລີອິງແກ້ວ.**

ການຄຸ້ມຄອງ, ຕິດຕາມ, ກວດກາ ແລະປົກປັກຮັກສາ, ສ້າງແຜນບູລະນະ, ປັບປຸງ, ປະຕິສັງຂອນອາຄານ, ສ້ອມແປງວັດຖຸອຸປະກອນ, ອາຄານ, ສະຖານທີ່ໃນເສົາຫຼັກເມືອງ ແລະອະນຸສາວະລີອິງແກ້ວໃນແຕ່ລະໄລຍະ, ຂຶ້ນບັນຊີວັດຖຸອຸປະກອນ, ວັດຖຸພັນ ຢູ່ສວນເສົາຫຼັກເມືອງ ແລະ ອະນຸສາວະລີອິງແກ້ວເພື່ອຮັບປະກັນບໍ່ໃຫ້ເປ່ເພເສຍຫາຍ.

**ມາດຕາ 8 ການຊົມໃຊ້.**

ວັນສຳຄັນຂອງຊາດ, ຂອງແຂວງແມ່ນໄດ້ມີການສັກກະລະບູຊາກາບໄຫວ້ ແລະຈັດງານບຸນນະມັດສະການເພື່ອລະນຶກເຖິງມູນເຊື້ອຄວາມສາມັກຄີ, ຄຸນງາມຄວາມດີຄວາມເສຍສະຫຼະເພື່ອຊາດຂອງອິງແກ້ວ ສ້າງຂວັນກຳລັງໃຈໃນການປະຕິບັດວຽກງານ, ສ້າງຄຸນຄ່າທາງດ້ານວັດທະນະທຳ ແລະປະຫວັດສາດຂອງແຂວງ;

ປວງຊົນລາວບັນດາເຜົ່າ, ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດສາມາດເຂົ້າມາທ່ຽວຊົມ, ສັກກະລະບູຊາ, ກາບໄຫວ້ ໄດ້ເປັນປົກກະຕິໃນແຕ່ລະວັນ.

**ມາດຕາ 9 ການເຂົ້າສັກກະລະບູຊາ, ກາບໄຫວ້.**

ການເຂົ້າສັກກະລະບູຊາ ແລະກາບໄຫວ້ ອານຸສາວະລີອິງແກ້ວ ແລະເສົາຫຼັກເມືອງ ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງເປັນທາງການ ແມ່ນໃຫ້ແຈ້ງ ຫຼື ສະເໜີ ຫາເຈົ້າໜ້າທີ ພະນັກງານທີ່ຮັບຜິດຊອບກ່ອນ 1-3 ມື້ ເພື່ອໃຫ້ມີການກະກຽມ ແລະເປັນຜູ້ນຳພາຈັດຕັ້ງພິທີຕາມລະບຽບການ, ການລຽນແຖວ, ຢືນກົງ ປິ່ນໜ້າໃສ່ເສົາຫຼັກເມືອງ, ຮູບປັ້ນທ່ານອິງແກ້ວ ແລະຖືທູບທີ່ຈູດແລ້ວ (ຈຳນວນຄີກ) ເພື່ອເຄົາລົບແລະລະນຶກເຖິງຄຸນງາມຄວາມດີຂອງປະຊາຊົນບັນດາເຜົ່າຊາວແຂວງເຊກອງ, ວິລະຊົນອິງແກ້ວ ແລ້ວອາທິຖານກົ້ມຫົວໃຊ້ເວລາ 1-3 ນາທີ ແລ້ວຈຶ່ງເອົາທູບປັກໄວ້ສະຖານທີ່ ທີ່ຄະນະຮັບຜິດຊອບກະກຽມໄວ້; ກໍລະນີຕ້ອງການທ່ຽວຊົມແມ່ນໃຫ້ພະນັກງານຮັບຜິດຊອບເປັນຜູ້ອະທິບາຍ ແລະນຳທ່ຽວຊົມ.

ສຳລັບການເຂົ້າສັກກາລະບູຊາທົ່ວໄປ(ແບບບໍ່ເປັນທາງການ) ແມ່ນໃຫ້ປະຕິບັດຕາມລະບຽບທີ່ຕິດປະກາດໄວ້ ຫຼື ຕາມການແນະນຳຂອງພະນັກງງານຮັບຜິດຊອບສະຖານທີ່.

**ມາດຕາ 10 ງານບຸນນະມັດສະການເສົາຫຼັກເມືອງ ແລະ ອະນຸສາວະລີອິງແກ້ວ.**

ບຸນນະມັດສະການເສົາຫຼັກເມືອງ ແລະອະນຸສາວະລີອິງແກ້ວ ກຳນົດໃຫ້ຈັດຂຶ້ນໃນມື້ອອກໃໝ່ 13-14-15 ຄໍ່າເດືອນຍີ່ເພັງຂອງທຸກໆປີໂດຍການມີສ່ວນຮ່ວມຂອງພາກລັດ ແລະອົງການຈັດຕັ້ງທຸກພາກສ່ວນຂອງສັງຄົມຕະຫຼອດຮອດຊາວພຸດຊະນິກະຊົນທັງຫຼາຍທີ່ມີຄວາມເຫຼື້ອມໃສສັດທາໃນການຈັດບຸນນະມັດສະການປະຈຳປີແລະຄົບຮອບ 5 ປີ ຖ້າຮອດວັນດັ່ງກ່າວປີໃດມີເຫດສຸກເສີນເກີດຂຶ້ນບໍ່ສາມາດຈັດ

ງານໄດ້ໃຫ້ຈັດໃນປີຕໍ່ໄປສ່ວນງານບຸນນະມັດສະການໃຫຍ່ໃຫ້ຈັດຂຶ້ນຄົບຮອບ 10 ປີຕາມທີ່ໄດ້ກຳນົດໄວ້ໃນປະຕິທິນງານບຸນ;

ກິດຈະກຳງານບຸນນະມັດສະການ ເສົາຫຼັກເມືອງ ແລະອະນຸສາວະລີອົງແກ້ວ ປະກອບມີພິທີທາງພຸດທະສາສະໜາ ໂດຍນິມົນພຣະສົງຈາກວັດຕ່າງໆຂອງແຂວງເຊກອງ ເພື່ອເຂົ້າຮ່ວມພິທີທາງພຸດທະສາສະໜາ, ມີກອງບຸນ, ເຄື່ອງສັກກະລະບູຊາກາບໄຫວ້, ມີການຄົບງັນ, ມື້ຂຶ້ນ 13 ຄ່ຳເດືອນຍີ່ ເປັນມື້ທ້າງຫາກະກຽມຕ່າງໆ, ມື້ຂຶ້ນ 14 ຄ່ຳ ເດືອນຍີ່ ມີພິທີແຫ່ຂັນໝາກເບັງອ້ອມເສົາຫຼັກເມືອງ 3 ຮອບແລະ ແຫ່ຂຶ້ນອະນຸສາວະລີອົງແກ້ວ 1 ຮອບແລະມື້ເພັງ 15 ຄ່ຳ ມີພິທີຕັກບາດຖະຫວາຍສັງຄະທານ.

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສົມທົບກັບເມືອງລະມາມ, ບ້ານເທສະບານ ເປັນເຈົ້າການ ຈັດກິດຈະກຳ ງານບຸນນະມັດສະການໃນແຕ່ລະປີ ໂດຍສົມທົບກັບອົງການປົກຄອງແຂວງ, ອົງການແນວລາວສ້າງຊາດ, ອົງການພຸດທະສາສະໜາສຳພັນລາວແຂວງ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນແຂວງ.

**ມາດຕາ 11 ອົງປະກອບ, ຂອບເຂດເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ**

ສະຖານທີ່ເສົາຫຼັກເມືອງ ມີເສົາຫຼັກເມືອງສູງ 9 ແມັດ, ມີຕຸ່ມຢູ່ຫົວເສົາ 9 ຕຸ່ມ, ມີຮູບປັ້ນຈຳລອງ 10 ເຜົ່າ ມີສວນສາທາລະນະ ແລະມີເນື້ອທີ່ທັງໝົດ 5,445 ຕາແມັດ, ທິດເໜືອ, ທິດຕາເວັນອອກ ແລະ ທິດຕາເວັນຕົກຕິດກັບທາງເລກທີ 16 B, ທິດໃຕ້ຕິດກັບທາງສາຍແຈກ;

ສະຖານທີ່ອະນຸສາວະລີອົງແກ້ວ ມີຮູບປັ້ນຫຼໍ່ ຈຳລອງລັກສະນະຂອງອົງແກ້ວ ມີລວງສູງ 4,9 ແມັດ ນ້ຳໜັກ 6ໂຕນ, ຮູບປັ້ນດ້ວຍທອງສຳລິດ ປິ່ນໜ້າໄປທາງທິດເໜືອ ທີ່ເປັນບ້ານເກີດ ຂອງທ່ານອົງແກ້ວ ແລະສວນສາທາລະນະມີເນື້ອທີ່ທັງໝົດ 4,11 ເຮັກຕາ, ທິດເໜືອຕິດກັບທີ່ດິນຂອງປະຊາຊົນ ລວງຍາວ 200 ແມັດ, ທິດໃຕ້ຕິດກັບທີ່ດິນປ້ອງກັນຊາດ ລວງຍາວ 200 ແມັດ, ທິດຕາເວັນອອກຕິດກັບເສັ້ນທາງ 16 B ລວງຍາວ 150 ແມັດ ແລະ ທິດຕາເວັນຕົກຕິດກັບ ຕີນພູຫຼັງແຄງ ມີລວງຍາວ 150 ແມັດ

## ໝວດທີ 3
## ການປົກປັກຮັກສາ ແລະ ພັດທະນາເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ

**ມາດຕາ 12 ການປົກປັກຮັກສາ**

ເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວໄດ້ຮັບການປົກປັກຮັກສາ ເພື່ອບໍ່ໃຫ້ຖືກບຸກລຸກທຳລາຍ, ເສຍຫາຍຈາກການກະທຳຂອງຄົນ, ສັດ ແລະຈາກໄພທຳມະຊາດ ດ້ວຍການວາງແຜນປ້ອງກັນ, ເວນຍາມ ແລະ ອະນາໄມ ຮັບປະກັນບໍ່ໃຫ້ວັດຖຸເປ່ເພເສຍຫາຍ.

**ມາດຕາ 13 ການພັດທະນາ**

ພັດທະນາເສົາຫຼັກເມືອງ ແລະອະນຸສາວະລີອົງແກ້ວໃຫ້ມີຄວາມສວຍງາມ ແລະຍືນຍົງ ເພື່ອເປັນທ່າແຮງທັນເປັນຫົວໜ່ວຍລາຍຮັບໃນຂະແໜງການທ່ອງທ່ຽວ ປະກອບສ່ວນການພັດທະນາເສດຖະກິດສັງຄົມຂອງແຂວງ.

**ມາດຕາ 14 ການຟື້ນຟູ**

ການຟື້ນຟູ ເສົາຫຼັກເມືອງ ແລະ ອະນຸສາວະລີອີງແກ້ວ ແມ່ນການ ເຮັດໃຫ້ສ່ວນທີ່ຖືກທາລາຍ ແລະ ເຊື່ອມໂຊມ ໄດ້ຮັບການປະຕິສັງຂອນໃຫ້ກັບຄືນສູ່ສະພາບດີ;

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສ່ວນຮ່ວມໃນການຟື້ນຟູ ເສົາຫຼັກເມືອງ ແລະອະນຸສາວະລີອີງແກ້ວ;

ການຟື້ນຟູຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທາ ແລະ ທ່ອງທ່ຽວ.

**ມາດຕາ 15 ງົບປະມານ**

- ງົບປະມານຂອງລັດ;
- ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ;
- ການຈັດງານບຸນນະມັດສະການໃນແຕ່ລະປີ;
- ພາກສ່ວນຕ່າງໆທີ່ດໍາເນີນກິດຈະການ.

**ມາດຕາ 16 ການນໍາໃຊ້ງົບປະມານ**

ການນໍາໃຊ້ງົບປະມານແມ່ນນາໃຊ້ເຂົ້າໃນກິດຈະການປົກປັກຮັກສາ, ບູລະນະ, ສ້ອມແປງ ຫຼື ການພັດທະນາສະຖານທີ່ເສົາຫຼັກເມືອງ ແລະ ອະນຸສາວະລີອີງແກ້ວ;

ລາຍຮັບຈາກການຈັດງານບຸນນະມັດສະການໃນແຕ່ລະປີ ພາຍຫຼັງຫັກຄ່າໃຊ້ຈ່າຍໃນການຈັດງານບຸນແລ້ວ, ແມ່ນຄິດເປັນ 100% ແລ້ວແບ່ງໃຫ້ເມືອງ 20%, ບ້ານ20% ແລະ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວ 60% ເພື່ອນໍາໃຊ້ເຂົ້າໃນການບູລະນະປົກປັກຮັກສາເສົາຫຼັກເມືອງ ແລະ ອະນຸສາວະລີອີງແກ້ວ;

## ໝວດທີ 4
## ອົງການຄຸ້ມຄອງເສົາຫຼັກເມືອງ ແລະ ອະນຸສາວະລີອີງແກ້ວ

**ມາດຕາ 17 ອົງການຄຸ້ມຄອງ**

ອົງການຄຸ້ມຄອງເສົາຫຼັກເມືອງ ແລະອະນຸສາວະລີອີງແກ້ວປະກອບມີ 3 ຂັ້ນຄື: ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ;

**1. ຂັ້ນແຂວງປະກອບດ້ວຍ:**

- ອົງການປົກຄອງແຂວງ;
- ພະແນກຖະແຫຼງຂ່າວ, ວັດທະນະທາ ແລະ ທ່ອງທ່ຽວ;
- ພະແນກການເງິນແຂວງ;
- ກໍາລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບແຂວງ;
- ແນວລາວສ້າງຊາດແຂວງ;
- ອົງການຈັດຕັ້ງມະຫາຊົນແຂວງ;
- ອົງການພຸດທະສາສະໜາສໍາພັນລາວແຂວງ.

2. ຂັ້ນເມືອງປະກອບດ້ວຍ:

- ອົງການປົກຄອງເມືອງລະມາມ;
- ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງລະມາມ;
- ກໍາລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບເມືອງລະມາມ;
- ແນວລາວສ້າງຊາດເມືອງລະມາມ;
- ຫ້ອງການພາຍໃນເມືອງລະມາມ;
- ອົງການພຸດທະສາສະໜາສໍາພັນລາວເມືອງລະມາມ.

3. ຂັ້ນບ້ານປະກອບດ້ວຍ:

- ອົງການປົກຄອງບ້ານເທສະບານ;
- ກໍາລັງປ້ອງກັນຊາດ-ກໍາລັງປ້ອງກັນຄວາມສະຫງົບ ບ້ານເທສະບານ;
- ແນວໂຮມບ້ານເທສະບານ;
- ປະຊາຊົນບ້ານເທສະບານ;

**ມາດຕາ 18 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ ແຕ່ລະຂັ້ນ**

1. ຂັ້ນແຂວງ.

- ອົງການປົກຄອງແຂວງ ມີພາລະບົດບາດໃນການຊີ້ນໍາ, ຊຸກຍູ້ໃຫ້ຂະແໜງການຂັ້ນແຂວງ, ຂັ້ນເມືອງ ໃນການຄຸ້ມຄອງ ເສົາຫຼັກເມືອງ ແລະອະນຸສາວະລີອົງແກ້ວ;
- ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ: ມີພາລະບົດບາດໃນການເປັນຕົວແທນອົງການປົກຄອງແຂວງ ຕິດຕາມ, ກວດກາ ແລະ ປົກປັກຮັກສາ, ສ້າງແຜນບູລະນະ, ປັບປຸງ, ປະຕິສັງຂອນອາຄານ, ສະຖານທີ່ ພ້ອມທັງອະນາໄມ, ຕົບແຕ່ງໃຫ້ມີຄວາມສວຍງາມ ໃນແຕ່ລະໄລຍະ, ຂຶ້ນບັນຊີວັດຖຸປະກອນ ແລະ ວັດຖຸພັນຢູ່ເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ;
- ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ມີພາລະບົດບາດໃນການປ້ອງກັນເວນຍາມ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຕ້ານ ແລະ ສະກັດກັ້ນປະກົດການຂີ້ລັກ, ງັດແງະ ຫຼື ສວຍໃຊ້ສະຖານທີ່ດັ່ງກ່າວເຄື່ອນໄຫວສິ່ງທີ່ຜິດຕໍ່ຮີດຄອງປະເພນີ ແລະລະບຽບກົດໝາຍ;
- ພະແນກການເງິນແຂວງ ມີໜ້າທີ່ໃນການພິຈາລະນາ, ຄຸ້ມຄອງ ແລະ ອະນຸມັດລາຍຮັບ-ລາຍຈ່າຍດ້ານງົບປະມານໃນການບູລະນະ, ປັບປຸງ, ປະຕິສັງຂອນ ແລະ ອື່ນໆທີ່ຈໍາເປັນ;
- ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການພຸດທະສາສະໜາສໍາພັນລາວແຂວງ ມີສ່ວນຮ່ວມໃນການຈັດງານບຸນນະມັດສະການເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ.

2. ຂັ້ນເມືອງ

ອົງການປົກຄອງເມືອງ, ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວເມືອງ, ອົງການພຸດທະສາສະໜາທະສາສະໜາສໍາພັນລາວເມືອງ, ແນວລາວສ້າງຊາດເມືອງ ແລະຫ້ອງການພາຍໃນເມືອງ ເຂົ້າຮ່ວມການຈັດງານບຸນນະມັດສະການ ແລະ ການຈັດກິດຈະກໍາຕ່າງໆທີ່ກ່ຽວພັນກັບເສົາຫຼັກເມືອງ ແລະອະນຸສາວະລີອົງແກ້ວ.

3. ຂັ້ນບ້ານ.

- ຄຸ້ມຄອງ, ປົກປັກຮັກສາ ຊັບສິນບັດພາຍໃນເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ;
- ສະເໜີແຜນງົບປະມານຮັບໃຊ້ໃນການຈັດງານບຸນນະມັດສະການ;

- ເປັນເຈົ້າພາບໃນການຈັດງານບຸນນະມັດສະການເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ;
- ເຂົ້າຮ່ວມງານບຸນນະມັດສະການ;
- ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນການຈັດງານບຸນນະມັດສະການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 19 ຂໍ້ຫ້າມທົ່ວໄປ.**

1. ນໍາໃຊ້ສະຖານທີ່ດັ່ງກ່າວເປັນບ່ອນມົ້ວສຸມສິ່ງເສບຕິດ, ຫຼິ້ນການພະນັນທຸກປະເພດ, ສິ່ງລາມົກອານາຈານການກະທໍາທີ່ຜິດຕໍ່ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າແລະ ລະບຽບກົດໝາຍ;
2. ນໍາເອົາອຸປະກອນທາດລະເບີດ, ວັດຖຸເປັນພິດ, ໄວໄຟ ແລະອາວຸດທີ່ເປັນອັນຕະລາຍເຂົ້າມາໃນສະຖານທີ່ເສົາຫຼັກເມືອງ ແລະອະນຸສາວະລີອົງແກ້ວ ໂດຍເດັດຂາດ;

**ມາດຕາ 20 ຂໍ້ຫ້າມສໍາລັບການຈັດຕັ້ງ.**

1. ຈັດກິດຈະກໍາຕ່າງໆ ໃນສະຖານທີ່ແຫ່ງນີ້ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
2. ນໍາໃຊ້ສະຖານທີ່ດັ່ງກ່າວເປັນບ່ອນຊຸມນຸມໂຄສະນາຊວນເຊື່ອທີ່ຂັດຕໍ່ລະບຽບກົດໝາຍ.

**ມາດຕາ 21 ຂໍ້ຫ້າມສໍາລັບບຸກຄົນ.**

1. ຖິ້ມຂີ້ເຫຍື່ອ, ສິ່ງເສດເຫຼືອຕ່າງໆຊະຊາຍໂດຍເດັດຂາດ;
2. ນໍາສິ່ງມຶນເມົາ, ເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ເຂົ້າມາດື່ມຢູ່ໃນເຂດເສົາຫຼັກເມືອງ ແລະອະນຸສາວະລີອົງແກ້ວ;
3. ນຸ່ງຖືທີ່ບໍ່ສຸພາບ, ຂັດກັບຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ; ເພດຍິງຫ້າມນຸ່ງສິ້ງ, ນຸ່ງກະໂປ່ງ, ເຂົ້າສັກກະລະບູຊາ, ກາບໄຫວ້ ເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ;
4. ນໍາໃຊ້ສະຖານທີ່ດັ່ງກ່າວເປັນບ່ອນຫຼິ້ນກິລາທຸກປະເພດ(ອະນຸຍາດໃຫ້ແຕ່ຍ່າງອອກກໍາລັງກາຍ);
5. ຂຶ້ນນັ່ງ, ນອນ, ຂຶ້ນຢຽບ, ງັດແງະຕົວໜັງສື, ລວດລາຍ, ຍົກຍ້າຍ, ທໍາລາຍທັດສະນີຍະພາບ, ຮູບປັ້ນຕ່າງໆຫຼືແຕ້ມ, ຂີດຂຽນໃສ່ປະຕິມະກໍາການກໍ່ສ້າງຕ່າງໆ ໃນສະຖານທີ່ແຫ່ງນີ້ໂດຍເດັດຂາດ;
6. ນໍາສັດລ້ຽງ ແລະ ປ່ອຍສັດທຸກປະເພດໃນສະຖານທີ່ດັ່ງກ່າວ.

## ໝວດທີ 6
## ອົງການຕິດຕາມ ກວດກາ

**ມາດຕາ 22 ອົງການຕິດຕາມກວດກາ.**

ອົງການຕິດຕາມກວດກາການຄຸ້ມຄອງເສົາຫຼັກເມືອງ ແລະ ອະນຸສາວະລີອົງແກ້ວ ປະກອບດ້ວຍອົງການຕິດຕາມກວດກາພາຍໃນ ແລະ ອົງການກວດກາພາຍນອກ;

1. ອົງການຕິດຕາມກວດກາພາຍໃນ

- ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ;
- ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງລະມາມ.

2. ອົງການຕິດຕາມກວດກາພາຍນອກ.

- ສະພາປະຊາຊົນແຂວງ;
- ອົງການປົກຄອງແຂວງ;
- ແນວລາວສ້າງຊາດແຂວງ;
- ອົງການຈັດຕັ້ງມະຫາຊົນແຂວງ;
- ສື່ມວນຊົນ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງອົງການຕິດຕາມກວດກາ ພາຍໃນ ແລະ ພາຍນອກ.**

- ກວດກາການຈັດຕັ້ງປະຕິບັດແຜນງານ, ໂຄງການ, ງົບປະມານ, ການໃຊ້ຈ່າຍໃນການຈັດງານບຸນ ແລະກິດຈະກຳຕ່າງໆ;
- ກວດກາ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕໍ່ວຽກງານດັ່ງກ່າວ;
- ສະເໜີຂັ້ນເທິງຄົ້ນຄວ້າ-ພິຈາລະນາເປົ້າໝາຍທີ່ຖືກກວດກາ;
- ກວດກາຄວາມເປັນລະບຽບຮຽບຮ້ອຍໃນການຈັດງານບຸນນະມັດສະການ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 24 ຮູບແບບການກວດກາ.**

- ກວດກາປົກກະຕິ;
- ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
- ກວດກາແບບກະທັນຫັນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ປະກອບສ່ວນບູລະນະ, ປະຕິສັງຂອນ ແລະ ອະນຸລັກຮັກສາມູນເຊື້ອວັດທະນະທຳອັນດີງາມດ້ວຍການສະໜັບສະໜູນ ການຈັດບຸນນະມັດສະການ ຈະໄດ້ຮັບການຍ້ອງຍໍຕາມລະບຽບການ;

**ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ໃຊ້ແທນຄ່າເສຍຫາຍ, ປັບໄໝ ແລະ ຖືກລົງໂທດທາງອາຍາຕາມກໍລະນີໜັກ ຫຼື ເບົາ;

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ.**

ມອບໃຫ້ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ, ເປັນເຈົ້າການປະສານສົມທົບກັບອົງການປົກຄອງເມືອງລະມາມ ແລະພາກສ່ວນທີ່ກ່ຽວຂ້ອງ ພ້ອມກັນຈັດຕັ້ງຜັນຂະຫຍາຍ ແລະປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 28 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນ ແລະພາຍຫຼັງລົງຈົດໝາຍເຫດທາງລັດຖະການ 15 ວັນ ເປັນຕົ້ນໄປ.

**ເຈົ້າແຂວງ**

ເຫລັກໄຫລ ສີວິໄລ